**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 34 / ນຍ

ນະຄອນຫຼວງວຽງຈັນວັນທີ 14 / 02/ 2006

# ດຳລັດ
# ວ່າດ້ວຍກອງທຶນສົ່ງເສີມການສົ່ງອອກ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສ ປ ປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍງົບປະມານ ສະບັບເລກທີ 05/ 94/ ສພຊ,ລົງວັນທີ18/ 7/ 1994.
- ອີງຕາມການສະເໜີຂອງລັດຖະມົນຕີວ່າການ ກະຊວງການຄ້າສະບັບເລກທີ1305 /ກຄ.ສຄລ, ລົງວັນທີ 23 ທັນວາ 2005.

## ນາຍົກລັດຖະມົນຕີອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ດຳລັດກອງທຶນສົ່ງເສີມການສົ່ງອອກສະບັບນີ້ ກຳນົດລະບຽບການກ່ຽວກັບ ການ ສ້າງຕັ້ງ, ການຄຸ້ມຄອງ, ບໍລິຫານ ແລະ ກວດກາກອງທຶນສົ່ງເສີມການ ສົ່ງອອກ ແນໃສ່ລະ ດົມທຶນຈາກແຫຼ່ງຕ່າງໆໃຫ້ມີພຽງພໍ, ສະໝ່ຳສະເໝີ ແລະໝັ້ນຄົງເພື່ອຊຸກຍູ້ການ ພັດທະນາສິນຄ້າ ໃຫ້ໄດ້ຕາມຄວາມຕ້ອງການ ຂອງຕະຫຼາດ ຕ່າງປະເທດ, ສົ່ງເສີມການ ສົ່ງອອກ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງ ຊາດ.

**ມາດຕາ 2: ນິຍາມ**

- ກອງທຶນສົ່ງເສີມການສົ່ງອອກ ແມ່ນອົງການຈັດຕັ້ງໜຶ່ງຂອງລັດທີ່ມີໜ້າທີ່ຊອກ ຫາທຶນ, ລະດົມທຶນ ແລະ ນຳໃຊ້ທຶນເຂົ້າໃນການສົ່ງເສີມການສົ່ງອອກ, ມີຊື່ຫຍໍ້ແມ່ນ " ກທສອ "

- ຫົວໜ່ວຍທຸລະກິດສົ່ງອອກໝາຍເຖິງ ບັນດາຫົວໜ່ວຍທຸລະກິດທີ່ໄດ້ຈົດທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍຂອງ ສ.ປ.ປ.ລາວ

- ຄະນະກຳມະການໝາຍເຖິງຄະນະກຳມະການບໍລິຫານ ກອງທຶນສົ່ງເສີມການ ສົ່ງອອກ

ມາດຕາ 3: **ເປົ້າໝາຍຂອງການປະກອບທຶນ**

- ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກສິນຄ້າບາງປະເພດ ຕາມບັນຊີລາຍການສິນຄ້າ ຕາມແຈ້ງການຂອງກະຊວງການຄ້າ ຈະຕ້ອງໄດ້ປະກອບສ່ວນເຂົ້າໃນກອງທຶນ ສົ່ງເສີມການສົ່ງອອກ.

ມາດຕາ 4: **ຫຼັກການເຄື່ອນໄຫວຂອງກອງທຶນ**

- ກອງທຶນຕ້ອງເຄື່ອນໄຫວຢ່າງມີແຜນການ, ມີການກວດກາ, ມີການສະ ຫຼຸບລາຍງານ ແລະຕີລາຄາເປັນປົກກະຕິຕາມຫຼັກການ, ຮັບປະກັນໃຫ້ມີຄວາມໂປ່ງໃສໃນ ການ ບໍລິຫານ ແລະນຳໃຊ້, ແນໃສ່ບັນລຸຕາມເປົ້າໝາຍ ແລະ ມີປະ ສິດທິຜົນສູງ.

ມາດຕາ 5: **ຂອບເຂດການນຳໃຊ້**

- ດຳລັດສະບັບນີ້ນຳໃຊ້ໃນຂອບເຂດທົ່ວປະເທດສຳລັບທຸກໆຫົວໜ່ວຍທຸລະກິດສົ່ງອອກສິນຄ້າຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ວັກສອງ ຂອງດຳລັດສະບັບນີ້.

## ໝວດທີ II
## ແຫຼ່ງທຶນ ແລະ ການນຳໃຊ້ທຶນ

ມາດຕາ 6: **ແຫຼ່ງທຶນ (ລາຍຮັບ) ຂອງກອງທຶນ**

- ແຫຼ່ງທຶນ(ລາຍຮັບ)ຂອງກອງທຶນໄດ້ມາຈາກ:

1. ງົບປະມານແຫ່ງລັດ
2. ການຊ່ວຍເຫຼືອລ້າ ຫຼື ການກູ້ຢືມຈາກຕ່າງປະເທດ
3. ການບໍລິຈາກ ຫລືການປະກອບສ່ວນ ຂອງບຸກຄົນຫລື ອົງການຈັດຕັ້ງດ້ວຍຄວາມສະຫມັກໃຈ
4. ການບໍລິການ ແລະ ຄ່າທຳນຽມຕ່າງໆ
5. ດອກເບ້ຍເງິນຝາກ ແລະ ເງິນປັນຜົນຈາກການລົງທຶນຂອງກອງທຶນ

ມາດຕາ 7: **ລາຍຈ່າຍຂອງກອງທຶນສົ່ງເສີມການສົ່ງອອກ**

- ກອງທຶນສົ່ງເສີມການສົ່ງອອກຈະຖືກນຳໃຊ້ເຂົ້າໃນເປົ້າໝາຍດັ່ງນີ້ :

1. ສະໜັບສະໜູນໂຄງການສົ່ງເສີມການສົ່ງອອກ
2. ສະໜັບສະໜູນດ້ານສິນເຊື່ອແກ່ ທຸລະກິດ
3. ຄ່າໃຊ້ຈ່າຍບໍລິຫານຂອງ ຄະນະກຳມະການກອງທຶນສົ່ງເສີມການສົ່ງອອກ

4. ຄ່າບໍລິຫານຂອງຫ້ອງການສົ່ງເສີມການສົ່ງອອກ
5. ວຽກງານອື່ນໆທີ່ກ່ຽວຂ້ອງກັບການສົ່ງເສີມການສົ່ງອອກ

<u>ມາດຕາ 8</u>: **ແຜນການເກັບລາຍຮັບ-ລາຍຈ່າຍຂອງກອງທຶນສົ່ງເສີມການສົ່ງອອກ**

- ຄະນະກຳມະການກອງທຶນສົ່ງເສີມການສົ່ງອອກ ເປັນຜູ້ພິຈາລະນາຕົກ ລົງແຜນການ ລາຍຮັບ-ລາຍຈ່າຍປະຈຳປີ ແລ້ວສະເໜີໃຫ້ ລັດຖະບານ ເປັນຜູ້ຕົກ ລົງຮັບຮອງເອົາ.

<u>ມາດຕາ 9</u>: **ການຖືບັນຊີ, ບັນຊີເງິນຝາກ**

- ກອງທຶນສົ່ງເສີມການສົ່ງອອກຕ້ອງຖືບັນຊີຕາມລະບອບການບັນຊີແຫ່ງລັດ. ກອງທຶນ ສົ່ງເສີມການສົ່ງອອກ ຕ້ອງເປີດບັນຊີເງິນຝາກຂອງຕົນໄວ້ຢູ່ທະນາ ຄານທຸລະກິດ ຂອງ ລາວ. ການຖອນເງິນຈາກບັນຊີຂອງກອງທຶນຕ້ອງຖອນດ້ວຍ " ແຊັກ ", ຊຶ່ງມີ ລາຍເຊັນ ຂອງສອງ ຄົນ ທີ່ໄດ້ຮັບການມອບສິດ ຈາກ ລັດຖະມົນຕີວ່າການ ກະຊວງ ການຄ້າ. ການນຳໃຊ້ເງິນ ຂອງກອງທຶນ ແມ່ນບໍ່ໃຫ້ເກີນລາຍຮັບ ທັງໝົດຂອງກອງ ທຶນໃນແຕ່ລະ ສົກປີງົບປະມານ ແລະໃຫ້ມີແຮໄວ້ຢ່າງພຽງພໍເພື່ອຊຳລະໜີ້ຂອງ ກອງທຶນ ແລະ ນຳໃຊ້ ໃນສົກປີງົບປະມານຕໍ່ໄປ. ເງິນແຮດັ່ງກ່າວ ແລະແຜນການ ນຳໃຊ້ງົບປະມານຕ້ອງໄດ້ ຮັບການຮັບຮອງ ຈາກ ລັດຖະມົນ ຕີວ່າການ ກະຊວງ ການຄ້າ.

<u>ມາດຕາ 10</u>: **ເງື່ອນໄຂໃນການນຳໃຊ້ທຶນ**

- ການນຳໃຊ້ທຶນໃຫ້ອີງໃສ່ເງື່ອນໄຂດັ່ງລຸ່ມນີ້:
  - ທຶນທີ່ມີ
  - ລະດັບຄວາມສຳຄັນ ແລະ ຄວາມຈຳເປັນຂອງແຕ່ລະວຽກງານ
  - ແຜນການທີ່ໄດ້ກຳນົດໄວ້
  - ຜົນງານຂອງຜູ້ສົ່ງອອກ
- ມອບໃຫ້ຄະນະບໍລິຫານກອງທຶນຄົ້ນຄວ້າສະເໜີ ລັດຖະມົນຕີວ່າການ ກະຊວງການຄ້າ ຕົກລົງກ່ຽວກັບເງື່ອນໄຂລະອຽດ ໃນການນຳໃຊ້ທຶນທີ່ກ່າວມາ ຂ້າງເທິງນີ້.

## ໝວດທີ III
## ການບໍລິຫານກອງທຶນ

<u>ມາດຕາ 11</u>: **ໂຄງຮ່າງການຈັດຕັ້ງກອງທຶນ**

- ກອງທຶນສົ່ງເສີມການສົ່ງອອກມີຄະນະກຳມະການບໍລິຫານກອງທຶນ
- ຄະນະກຳມະການບໍລິຫານກອງທຶນມີ ກົງຈັກຊ່ວຍວຽກຂອງຕົນ
- ຄະນະກຳມະການບໍລິຫານກອງທຶນ ແລະຫົວໜ້າກົງຈັກຊ່ວຍວຽກ ຢູ່ພາຍໃຕ້ການຊີ້ນຳ ຂອງ ທ່ານລັດຖະມົນຕີວ່າການ ກະຊວງການຄ້າ, ມີຫ້ອງການປະຈຳ ຢູ່ກະຊວງການຄ້າ.

ສຳລັບສູນສົ່ງເສີມການຄ້າລາວ ແມ່ນເປັນກົງຈັກຊ່ວຍວຽກ ຂອງຄະນະບໍລິຫານ ດັ່ງກ່າວ.

**ມາດຕາ 12: ກຳມະການບໍລິຫານກອງທຶນ**

- ຄະນະກຳມະການບໍລິຫານກອງທຶນປະກອບດ້ວຍ:

1. ລັດຖະມົນຕີຊ່ວຍວ່າການ ກະຊວງການຄ້າ ເປັນປະທານ
2. ຫົວໜ້າ ສູນສົ່ງເສີມການຄ້າລາວ ເປັນກຳມະການ ແລະເລຂາຄະນະ
3. ຫົວໜ້າ ກົມຄຸ້ມຄອງສິນຄ້ານຳເຂົ້າ ແລະ ສົ່ງອອກ ເປັນກຳມະການ
4. ຕາງໜ້າອົງການວິທະຍາສາດ, ເທັກໂນໂລຍີ ແລະສິ່ງແວດລ້ອມ ເປັນກຳມະການ
5. ຜູ້ຕາງໜ້າ ກະຊວງການເງິນ ເປັນກຳມະການ
6. ຜູ້ຕາງໜ້າ ທະນາຄານແຫ່ງ ສ ປ ປ ລາວ ເປັນກຳມະການ
7. ຜູ້ຕາງໜ້າ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ເປັນກຳມະການ
8. ຜູ້ຕາງໜ້າ ກະຊວງກະສິກຳ - ປ່າໄມ້ ເປັນກຳມະການ
9. ຜູ້ຕາງໜ້າ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເປັນກຳມະການ
10. ຕາງໜ້ານັກທຸລະກິດສົ່ງອອກ ທີ່ປະສົບຜົນສຳເລັດ, ສອງທ່ານ ເປັນກຳມະການ

- ຄະນະບໍລິຫານກອງທຶນ ຄັດເລືອກເອົາ ຮອງປະທານ ຈຳນວນໜຶ່ງ-ສອງ ທ່ານ ຈາກ ຄະນະກຳມະການບໍລິຫານກອງທຶນ.

**ມາດຕາ13: ມາດຕະຖານ ແລະ ເງື່ອນໄຂຂອງກຳມະການບໍລິຫານ ກອງທຶນສົ່ງເສີມການສົ່ງອອກທີ່ເປັນນັກທຸລະກິດ**

- ນັກທຸລະກິດ ທີ່ເປັນກຳມະການບໍລິຫານກອງທຶນຕ້ອງມີຄວາມຮູ້, ຄວາມ ສາມາດ, ມີປະສົບການຢ່າງໜ້ອຍຫ້າປີຂຶ້ນໄປ ແລະດຳເນີນທຸລະກິດ ກ່ຽວກັບ ການສົ່ງອອກໂດຍ ການ ຄັດເລືອກຈາກຕົວແທນຂອງພາກເອກະຊົນ ທີ່ດຳເນີນທຸ ລະກິດການສົ່ງອອກ.
- ນອກຈາກມາດຕະຖານຂ້າງເທິງນີ້ແລ້ວຕ້ອງມີມາດຕະຖານແລະເງື່ອນ ໄຂດັ່ງລຸ່ມນີ້:

1. ຕ້ອງແມ່ນຄົນສັນຊາດລາວ
2. ບໍ່ເປັນບຸກຄົນຖືກລົ້ມລະລາຍ
3. ບໍ່ເປັນບຸກຄົນທີ່ຂາດຄວາມສາມາດດ້ານການປະພຶດ
4. ບໍ່ເຄີຍຖືກຕ້ອງໂທດ, ເວັ້ນເສຍແຕ່ເປັນໂທດ ກ່ຽວກັບການກະທຳຜິດ ໃນກໍລະນີ ປະໝາດ ຫຼື ດ້ວຍການບໍ່ລະມັດລະວັງ

**ມາດຕາ 14: ອາຍຸການ ແລະການພົ້ນຈາກຕຳແໜ່ງ ຂອງຄະນະກຳມະການ ສົ່ງເສີມການສົ່ງອອກທີ່ມາຈາກ ນັກທຸລະກິດ**

- ຄະນະກຳມະການທີ່ມາຈາກນັກທຸລະກິດ ມີອາຍຸການສອງປີ ໃນໜຶ່ງສະໄໝ, ນັບແຕ່ມື້ຖືກແຕ່ງຕັ້ງ ເປັນຕົ້ນໄປ ແລະສາມາດໄດ້ຮັບການຄັດເລືອກອີກ ໃນສະໄໝຕໍ່ໄປ.

- ຄະນະກຳມະການທີ່ມາຈາກນັກທຸລະກິດອາດຈະພົ້ນຕຳແໜ່ງຕາມກໍລະນີດັ່ງນີ້:
  - ເສຍຊີວິດ
  - ລາອອກ
  - ມີຂໍ້ຕົກລົງຂອງ ລັດຖະມົນຕີວ່າການ ກະຊວງການຄ້າ ຕາມການສະເໜີ ຂອງຄະນະບໍລິຫານງານ
  - ຖືກຕັດອິດສະຫຼະພາບ
  - ຂາດຄຸນສົມບັດ ແລະ ອື່ນໆ

- ໃນກໍລະນີທີ່ກຳມະການ ເປັນນັກທຸລະກິດໃດໜຶ່ງ ທາກພົ້ນຈາກຕຳແໜ່ງກ່ອນຈົບວາລະຈະດ້ວຍເຫດຜົນໃດກໍ່ຕາມ ທີ່ກ່າວມາຂ້າງເທິງນັ້ນ, ໃຫ້ມີການແຕ່ງ ຕັ້ງຜູ້ໃໝ່ເຂົ້າມາແທນຜູ້ທີ່ພົ້ນຈາກຕຳແໜ່ງ ພາຍໃນກຳນົດໜຶ່ງເດືອນ ເປັນຢ່າງຊ້າ, ນັບແຕ່ວັນທີ່ກຳມະການ ຜູ້ເກົ່າພົ້ນຈາກຕຳແໜ່ງ. ສ່ວນອາຍຸການ ຂອງຜູ້ໃໝ່ແມ່ນເທົ່າກັບອາຍຸການ ຂອງຜູ້ເກົ່າ ທີ່ຍັງເຫຼືອຢູ່ ຂອງສະໄໝທີ່ຜູ້ກ່ຽວພົ້ນຈາກ ຕຳແໜ່ງໄປນັ້ນ.

**<u>ມາດຕາ 15</u>: ສິດ ແລະ ໜ້າທີ່ຂອງຄະນະບໍລິຫານກອງທຶນ**

- ຄະນະບໍລິຫານກອງທຶນມີສິດ ແລະ ໜ້າທີ່ດັ່ງນີ້:
  - ຄົ້ນຄວ້າອອກລະບຽບການເພີ່ມເຕີມໃນການຈັດຕັ້ງປະຕິບັດດຳລັດສະບັບນີ້
  - ຄົ້ນຄວ້າລະບຽບການ ກ່ຽວກັບການເຄື່ອນໄຫວວຽກງານ, ສິດ ແລະໜ້າທີ່ຂອງກົງຈັກ ຊ່ວຍວຽກ ພ້ອມທັງຊີ້ນຳການເຄື່ອນໄຫວວຽກງານ ຂອງກົງຈັກຊ່ວຍວຽກດັ່ງກ່າວ
  - ຊອກລາຍຮັບໃຫ້ແກ່ກອງທຶນ
  - ນຳໃຊ້ທຶນໃຫ້ສອດຄ່ອງກັບເປົ້າໝາຍ ການນຳໃຊ້ເງິນຂອງກອງທຶນ ຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 7 ຂອງດຳລັດສະບັບນີ້
  - ຂຶ້ນແຜນການ ແລະສະຫຼຸບ ການເຄື່ອນໄຫວວຽກງານ ຂອງກອງທຶນໃນແຕ່ລະໄລຍະ
  - ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະບານ

**<u>ມາດຕາ 16</u>: ການເປີດເຜີຍຜົນປະໂຫຍດ**

- ກຳມະການຂອງຄະນະບໍລິຫານກອງທຶນຜູ້ໃດໜຶ່ງ ຫາກຮູ້ວ່າຕົນໄດ້ມີຜົນ ປະໂຫຍດ ຫຼື ມີການກະທຳຢ່າງໃດຢ່າງໜຶ່ງບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ຊຶ່ງຂັດກັບຄຸນວຸດທິໃນຖາ ນະເປັນກຳມະການ ຂອງຄະນະບໍລິຫານກອງທຶນຕ້ອງ ແຈ້ງຜົນປະໂຫຍດ ຫຼື ການກະທຳ ດັ່ງກ່າວ ໃຫ້ຄະນະບໍລິຫານກອງທຶນ ເພື່ອພິຈາ ລະນາທັນທີ.

**<u>ມາດຕາ 17</u>: ກອງປະຊຸມຂອງຄະນະກຳມະການບໍລິຫານກອງທຶນ**

- ກອງປະຊຸມສາມັນຂອງຄະນະກຳມະການບໍລິຫານກອງທຶນ ແມ່ນຈະຖືກ ຈັດຕັ້ງຂຶ້ນທຸກໆຫົກເດືອນ ແລະມີສະມາຊິກ ຂອງຄະນະເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂຶ້ນໄປ, ຈຶ່ງຈະຖືວ່າກອງປະຊຸມຄົບອົງປະກອບ. ກອງປະຊຸມວິສາມັນ ສາມາດຈັດຂຶ້ນໄດ້ທຸກໆເວລາ ຖ້າເຫັນວ່າມີວຽກສຳຄັນ ແລະຮີບດ່ວນ, ຕາມການຮຽກໂຮມ ຂອງປະ ທານ ຫຼື ການສະເໜີ ຂອງກຳມະການສາມຄົນຂຶ້ນໄປ.

## ໝວດທີ IV

## ການກວດສອບ, ການກວດກາ ແລະ ລະບຽບລາຍງານ

**ມາດຕາ 18: ການກວດສອບບັນຊີ**

- ບັນຊີຂອງກອງທຶນສົ່ງເສີມການສົ່ງອອກ ຕ້ອງໄດ້ຮັບການກວດສອບ ທຸກໆ 2 ປີ, ໂດຍອົງການກວດສອບບັນຊີແຫ່ງລັດ ຫຼື ອົງການກວດກາທີ່ໄດ້ຮັບ ມອບໝາຍ, ຜົນຂອງການກວດສອບຈະຕ້ອງເປີດເຜີຍໃຫ້ມວນຊົນຊາບ.

**ມາດຕາ 19: ການກວດກາສະເພາະກິດ**

- ນາຍົກລັດຖະມົນຕີ ສາມາດແຕ່ງຕັ້ງບຸກຄົນ ຫຼື ໜ່ວຍງານເພື່ອດຳເນີນ ການກວດກາສະເພາະກິດ ຕໍ່ການເຄື່ອນໄຫວວຽກງານ ຂອງຄະນະບໍລິຫານກອງທຶນ, ໃນກໍລະນີພົບເຫັນ ການກະທຳຜິດ, ຜູ້ລະເມີດຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 20: ການລາຍງານ**

- ຄະນະບໍລິຫານກອງທຶນ ຕ້ອງສົ່ງບົດລາຍງານ ການເຄື່ອນໄຫວປະຈຳປີໃຫ້ແກ່ ທ່ານລັດຖະມົນຕີວ່າການ ກະຊວງການຄ້າ, ທ່ານ ລັດຖະມົນຕີວ່າການ ກະຊວງການ ເງິນ ແລະ ທ່ານ ນາຍົກລັດຖະມົນຕີ. ການລາຍງານປະຈຳປີຊ້າສຸດ ບໍ່ໃຫ້ເກີນສາມ ເດືອນຫຼັງຈາກສິ້ນສຸດປີ ງົບປະມານ.
- ນອກຈາກນັ້ນ, ຄະນະບໍລິຫານກອງທຶນ ຕ້ອງໄດ້ປະຕິບັດຕາມ ກົດລະບຽບວ່າດ້ວຍລະບອບ ລາຍງານທາງດ້ານການເງິນ ທີ່ລັດໄດ້ກຳນົດໄວ້.

## ໝວດທີ V

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 21: ນະໂຍບາຍຕໍ່ຜູ້ມີຜົນງານ**

- ຜູ້ສົ່ງອອກທີ່ຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມແຜນການ ແລະນະໂຍບາຍຄື: ຜູ້ສົ່ງອອກທີ່ມີການສົ່ງອອກສິນຄ້າ ເປັນປົກກະຕິ, ຫຼື ມີມູນຄ່າສົ່ງອອກ ເພີ່ມຂຶ້ນ, ຫຼື ມີສິນຄ້າໃໝ່ໆສົ່ງອອກ, ຫຼື ມີຕະຫຼາດສົ່ງອອກໃໝ່, ຜູ້ປະກອບທຶນ ຫຼື ຜູ້ບໍລິຈາກຕ່າງໆ ແລະຜູ້ອື່ນໆຈະໄດ້ ຮັບນະໂຍບາຍຈາກລັດຖະບານ, ໄດ້ຮັບ ສິດທິພິເສດ ຫຼື ໄດ້ຮັບການຊ່ວຍເຫຼືອດ້ານເຕັກນິກວິຊາການ ແລະ ການຍ້ອງຍໍລະ ດັບຕ່າງໆ. ມອບໃຫ້ ຄະນະກຳ

ມະການບໍລິຫານກອງທຶນເປັນຜູ້ກຳນົດລາຍການລະອຽດ ຂອງນະໂຍບາຍ, ການໃຫ້ສິດທິພິເສດ ຫຼື ການຊ່ວຍເຫຼືອດ້ານເຕັກນິກວິ ຊາການ.

**ມາດຕາ 22: ມາດຕະການຕໍ່ຜູ້ລະເມີດ**

- ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກສິນຄ້າ ທີ່ຢູ່ໃນເປົ້າໝາຍການປະກອບທຶນ ຕາມມາດຕາ 3 ຂອງດຳລັດສະບັບນີ້ ທີ່ບໍ່ປະຕິບັດພັນທະຂອງຕົນ ຈະຖືກນຳໃຊ້ມາດຕະການ ບັງຄັບ ປະຕິບັດຕາມ ມາດຕາ 85 ແລະ 86 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ, ຕາມກໍລະນີໜັກ ຫຼື ເບົາ .
- ລັດຖະການພາສີ ແລະ ສ່ວຍສາອາກອນໄດ້ກະທຳຜິດຕາມກໍລະນີທີ່ໄດ້ ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ແມ່ນຈະຖືກ ປະຕິບັດວິໄນ ແລະດຳເນີນຄະດີຕາມມາດຕານີ້ ແລະ ກົດໝາຍທີ່ກ່ຽວຂ້ອງ ອື່ນໆ.
- ພະນັກງານ ຫຼືກຳມະການບໍລິຫານກອງທຶນສົ່ງເສີມການສົ່ງອອກ ທີ່ຮັບ ຜິດຊອບວຽກງານການເງິນ ຂອງກອງທຶນທາກລາຍງານ ສະພາບການເງິນ ບໍ່ຖືກຕ້ອງຕາມລະບົບບັນຊີ, ຕາມລະບຽບການ, ບໍ່ຖືກຕ້ອງຕາມຕົວຈິງ, ປົກປິດການ ກະທຳຜິດ ຫຼື ຊ່ວຍປົກປິດ, ປອມແປງ ຫຼື ຊ່ວຍປອມແປງຂໍ້ມູນຈະຖືກປະຕິບັດວິໄນ, ມີຄວາມຮັບຜິດຊອບທາງແພ່ງ ແລະຄວາມຮັບຜິດຊອບທາງອາຍາ (ຕາມ ມາດຕາ149 ແລະ150 ຂອງກົດໝາຍ ອາຍາ) ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ແລ້ວແຕ່ລະກໍລະນີ.

## ໝວດທີVI
## ບົດບັນຍັດສຸດທ້າຍ

**ມາດຕາ 23: ການຈັດຕັ້ງປະຕິບັດ**

- ມອບໃຫ້ ກະຊວງການຄ້າ ຈັດຕັ້ງຜັນຂະຫຍາຍດຳລັດສະບັບນີ້ ເປັນຂໍ້ກຳນົດ, ກົດລະບຽບອັນລະອຽດ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານ ຂອງກອງທຶນ ສົ່ງເສີມການສົ່ງອອກ
- ມອບໃຫ້ກະຊວງການຄ້າ, ກະຊວງການເງິນ, ຄະນະບໍລິຫານກອງທຶນສົ່ງເສີມ ການສົ່ງອອກ ແລະບັນດາພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 24: ຜົນສັກສິດ**

- ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບົດບັນຍັດ ແລະລະບຽບການໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ**

ນຍັງ ວໍລະຈິດ